ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************

ກະຊວງການເງິນ

ເລກທີ 2333 /ກງ

ນະຄອນຫລວງວຽງຈັນ, ວັນທີ 13 JUL 2015

# ຄໍາແນະນໍາ

## ຂອງລັດຖະມົນຕີວ່າການກະຊວງການເງິນ

### ກ່ຽວກັບການຈັດຕັ້ງປະຕິບັດ ມາດຕາ 6. ລັດຖະບັນຍັດ ຂອງປະທານປະເທດ ແຫ່ງ ສປປ ລາວ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ກ່ຽວກັບຄ່າທໍານຽມຈົດທະບຽນເອກະສານ

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບປັບປຸງ ສະບັບເລກທີ 14/ສພຊ, ລົງວັນທີ 5 ກໍລະກົດ 2014.
- ອີງຕາມ ກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບເລກທີ 01/ສພຊ ລົງວັນທີ 08 ທັນວາ 2008.
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍ ຄ່າທໍານຽມ ແລະ ຄ່າບໍລິການ.
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.

### ລັດຖະມົນຕີວ່າການ ກະຊວງການເງິນ ອອກຄໍາແນະນໍາ ດັ່ງນີ້:

I. <u>ຈຸດປະສົງ:</u>

ຄໍາແນະນໍາສະບັບນີ້ ໄດ້ກໍານົດລະອຽດແນໃສ່ເພື່ອຈັດຕັ້ງປະຕິບັດ ມາດຕາ 6. ຂອງລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ກ່ຽວກັບຄ່າທໍານຽມຈົດທະບຽນເອກະສານ ເພື່ອຮັບປະກັນໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ້ອງ ເຂົ້າໃຈວິທີຈັດຕັ້ງຜັນຂະຫຍາຍມາດຕາ 6. ຂອງລັດຖະບັນຍັດສະບັບດັ່ງກ່າວ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ແນ່ໃສ່ເຮັດໃຫ້ການບໍລິການຈົດທະບຽນ ດໍາເນີນຢ່າງເປັນລະບົບຕໍ່ເນື່ອງ ຮັບປະກັນການບໍລິການວ່ອງໄວ ແລະ ສ້າງລາຍຮັບເຂົ້າງົບປະມານໃຫ້ຖືກຕ້ອງ, ຄົບຖ້ວນ ທັນເວລາ.

II. <u>ເປົ້າໝາຍເອກະສານຕ້ອງໄດ້ນໍາມາຈົດທະບຽນ.</u>

ກ. ເອກະສານທີ່ຕ້ອງໄດ້ນໍາມາຈົດທະບຽນ ຕາມອັດຕາດຽວ 40.000 ກີບ ລວມມີບັນດາເອກະສານຕ່າງໆ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 06 ວັກທີ 01 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ລວມມີບັນດາ ເອກະສານດັ່ງນີ້:

1. ໜັງສືມອບກໍາມະສິດສືບທອດມູນມໍລະດົກ (ສັງຫາລິມະຊັບ);
2. ການເລື່ອນເວລາໃຊ້ໜີ້ສິນ ຫລື ສືບຕໍ່ຄໍ້າປະກັນ (ສັງຫາລິມະຊັບ);
3. ເອກະສານອື່ນໆທີ່ບໍ່ຈໍາເປັນຕ້ອງຈົດທະບຽນ ແຕ່ຜູ້ກ່ຽວນໍາມາຈົດທະບຽນ (ສັງຫາລິມະຊັບ);
4. ບົດບັນທຶກແບ່ງປັນທຶນຂອງບໍລິສັດ ທີ່ຖືກຫຍຸບໃຫ້ແກ່ຂາຮຸ້ນ;
5. ບົດບັນທຶກແບ່ງປັນຊັບ ລະຫວ່າງຜູ້ມີກໍາມະສິດຮ່ວມ;

6. ສັນຍາຊື້ - ຂາຍສັດ ຫລື ຜົນຜະລິດກະສິກຳທຸກປະເພດ;

7. ກິດລະບຽບບໍລິສັດ;

8. ສັນຍາຮັບໃຊ້ໜີ້;

9. ສັນຍາຊວດຈຳ;

10. ການດັດແກ້ສັນຍາ;

11. ໜັງສືມອບສັນທະໃຫ້ກັນ ເພື່ອທຳກິດຈະກຳຕ່າງໆແທນຕົນ;

12. ການຄ້ຳປະກັນດ້ວຍຊັບເຄື່ອນທີ່;

13. ໜັງສືຕົກລົງແບ່ງປັນສິນສົມສ້າງ.

<u>ຂ. ເອກະສານທີ່ຕ້ອງໄດ້ນຳມາຈົດທະບຽນ ແບບເດັດຖານຕາມມູນຄ່າຊັບ ລວມມີ:</u>

1. ສັນຍາໃຫ້ເຊົ່າ ຫຼື ໃຫ້ຜູ້ອື່ນເຊົ່າຕໍ່ ກ່ຽວກັບສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ເປັນຕົ້ນ: ສັນຍາເຊົ່າ, ສັນຍາສຳປະທານ ທີ່ດິນ-ເຮືອນ ລະຫວ່າງລັດ ກັບ ບຸກຄົນ, ນິຕິບຸກຄົນ ແລະ ສັນຍາເຊົ່າທີ່ດິນເຮືອນ ລະຫວ່າງບຸກຄົນດ້ວຍກັນ, ສັນຍາເຊົ່າພາຫະນະກົນຈັກ, ວັດຖຸອຸປະກອນຕ່າງໆຂອງລັດ ຫຼື ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຕ່າງໆທົ່ວໄປ ກໍ່ໃຫ້ນຳມາຈົດທະບຽນສັນຍາເຊົ່າ.
2. ສັນຍາສຳປະທານທີ່ດິນເພື່ອການກະສິກຳ, ອຸດສາຫະກຳ ແລະ ບໍລິການຕ່າງໆ ສັນຍາສຳປະທານຊັບພະຍາກອນທຳມະຊາດຕ່າງໆ ເປັນຕົ້ນ: ສັນຍາໃຫ້ສຳປະທານເພື່ອຂຸດຄົ້ນ, ສຳຫລວດ, ຂຸດຄົ້ນແຮ່ທາດ, ສັນຍາສຳປະທານເພື່ອຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ຫຼື ສັນຍາສຳປະທານ ເພື່ອການຂຸດຄົ້ນຫີນ, ຊາຍ, ດິນດຳ, ດິນແດງປະເພດຕ່າງໆ.
3. ສັນຍາກ່ຽວກັບການມອບ-ໂອນກຳມະສິດ ເປັນຕົ້ນ:
   - ການມອບໂອນການຊື້-ຂາຍພາຫະນະກົນຈັກ, ວັດຖຸອຸປະກອນ, ທີ່ຊື້ເຂົ້າມາໃໝ່ແມ່ນໝາຍເຖິງພາຫະນະ, ກົນຈັກ, ວັດຖຸອຸປະກອນເຊິ່ງນຳເຂົ້າມານຳໃຊ້ຢູ່ ສປປ ລາວ ເຊິ່ງຍັງບໍ່ທັນໄດ້ຂຶ້ນທະບຽນນຳໃຊ້ຢູ່ ສປປ ລາວ ເຖິງວ່າພາຫະນະ, ກົນຈັກ, ອຸປະກອນ ຈະຖືກນຳໃຊ້ແລ້ວ ຢູ່ຕ່າງປະເທດກໍ່ຕາມ ໃຫ້ຖືວ່າເປັນພາຫະນະ, ກົນຈັກ, ອຸປະກອນ ທີ່ນຳເຂົ້າມາໃໝ່ໃນ ສປປ ລາວ;
   - ການມອບໂອນການຊື້-ຂາຍພາຫະນະ, ກົນຈັກ, ວັດຖຸອຸປະກອນເຄື່ອງໃຊ້ທຸກປະເພດ ທີ່ນຳໃຊ້ໃນ ສປປ ລາວ ໝາຍເຖິງພາຫະນະ, ກົນຈັກ, ວັດຖຸອຸປະກອນ ທີ່ໄດ້ຂຶ້ນທະບຽນການນຳໃຊ້ເປັນຂອງບຸກຄົນ ຫຼື ນິຕິບຸກຄົນຢູ່ ສປປ ລາວ ແລ້ວ (ມີການຈົດທະບຽນແລ້ວ) ແຕ່ມີຈຸດປະສົງມອບໂອນສິດນຳໃຊ້ຕໍ່ໃຫ້ບຸກຄົນ, ນິຕິບຸກຄົນອື່ນໃນ ສປປ ລາວ.
   - ການຊື້ - ຂາຍໄມ້ ແປຮູບ, ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບອອກຕ່າງປະເທດ, ການຊື້ - ຂາຍໄມ້ທ່ອນ, ໄມ້ກິ່ງຫງ່າ ແລະ ຕໍໄມ້, ເຫົ້ງາໄມ້ ອອກຕ່າງປະເທດລວມມີ: ສັນຍາຊື້ - ຂາຍ ລະຫວ່າງລັດກັບບຸກຄົນ, ນິຕິບຸກຄົນ, ໂຮງງານປຸງແຕ່ງໄມ້ຕ່າງໆ ຫຼື ສັນຍາລະຫວ່າງຜູ້ສົ່ງອອກໄມ້ ກັບຜູ້ຊື້ໄມ້ຢູ່ຕ່າງປະເທດ ຫຼື ສັນຍາຊື້ - ຂາຍລະຫວ່າງບຸກຄົນ, ນິຕິບຸກຄົນພາຍໃນປະເທດ ຫຼື ການຊື້ - ຂາຍ ລະຫວ່າງໂຮງງານປຸງແຕ່ງກັບຜູ້ຊື້ຜະລິດຕະພັນສຳເລັດຮູບ.
   - ສັນຍາຊື້ - ຂາຍໄມ້ແປຮູບເພື່ອຮັບໃຊ້ ຫຼື ຂາຍພາຍໃນປະເທດ.
4. ສັນຍາໂອນຊັບເຂົ້າເປັນທຶນວິສາຫະກິດ.

   ສັນຍາໂອນຊັບສິນເຂົ້າເປັນທຶນຂອງວິສາຫະກິດ ລວມມີ: ພາຫະນະ, ກົນຈັກ, ເງິນ, ວັດຖຸອຸປະກອນເຄື່ອງໃຊ້ (ບໍ່ລວມທີ່ດິນ) ກໍລະນີບໍ່ເຮັດສັນຍາ ແມ່ນໃຫ້ຈົດທະບຽນໃສ່ ບັນຊີລາຍການຊັບສິນ ທີ່ໄດ້ຕີມູນຄ່າປະກອບເຂົ້າເປັນທຶນຂອງວິສາຫະກິດ.
5. ສັນຍາຮ່ວມປະກອບທຶນ ເພື່ອດຳເນີນທຸລະກິດປະເພດຕ່າງໆ ໝາຍເຖິງການຖືຮຸ້ນຮ່ວມກັນນັບແຕ່ 2 ຄົນ ຫຼື ສອງນິຕິບຸກຄົນຂຶ້ນໄປໃນທຸລະກິດປະເພດໃດໜຶ່ງ.

6. ສັນຍາປະເພດຕ່າງໆລວມມີ:

- ສັນຍາກູ້ຢືມເງິນ ຫຼື ຊັບສິ່ງຂອງລະຫວ່າງອົງການຈັດຕັ້ງລັດ ກັບບຸກຄົນ, ນິຕິບຸກຄົນ ຫຼື ລະຫວ່າງບຸກຄົນ ນິຕິບຸກຄົນ, ເອກະຊົນດ້ວຍກັນ;
- ໜັງສືໂອນໜີ້ສິນ, ສັນຍາມອບ ຫຼື ໂອນກິດຈະການ, ການຄ້າ, ການຜະລິດ, ການບໍລິການ ແລະ ການຂາຍຮຸ້ນລະຫວ່າງອົງການຈັດຕັ້ງລັດ ກັບບຸກຄົນ, ນິຕິບຸກຄົນ ຫຼື ລະຫວ່າງບຸກຄົນ, ນິຕິບຸກຄົນເອກະຊົນດ້ວຍກັນ;
- ສັນຍາປະກັນໄພຕ່າງໆ ຊຶ່ງຜູ້ປະກັນໄພ ໄດ້ຊື້ປະກັນໄພ ນຳ ບໍລິສັດ ປະກັນໄພ ທີ່ສ້າງຕັ້ງຂຶ້ນຢູ່ ສປປ ລາວ;
- ສັນຍາຊື້ - ຂາຍ ປະເພດ ເຄື່ອງກະສິກຳສິ່ງອອກເປັນຕົ້ນ: ເຂົ້າ, ມັນ, ອ້ອຍ, ໝາກສາລີ ແລະ ອື່ນໆ;
- ສັນຍາຊື້ - ຂາຍ ປະເພດ ສັດສົ່ງອອກ ເປັນຕົ້ນ: ງົວ, ຄວາຍ, ແລະ ອື່ນໆ;
- ສັນຍາຊື້ - ຂາຍ ເຄື່ອງປ່າຂອງດົງ, ຖ່ານດັງໄຟ ແລະ ອື່ນໆ;
- ສັນຍາຄ້ຳປະກັນ (ສັງຫາລິມະຊັບ) ຫຼື ບຸກຄົນ;
- ການຈົດທະບຽນຫຼັກຊັບຄ້ຳປະກັນ (ສັງຫາລິມະຊັບ) ສາມາດເຂົ້ານຳໃຊ້ ລະບົບຈົດທະບຽນການຄ້ຳປະກັນດ້ວຍສັງຫາລິມະຊັບທາງເອເລັກໂຕນິກ ທີ່ໄດ້ເປີດນຳໃຊ້ບໍລິການແລ້ວໃນວັນທີ 20 ພະຈິກ 2013;
- ສັນຍາດຳເນີນການສຳຫຼວດ, ອອກແບບຕ່າງໆ ເປັນຕົ້ນ: ສັນຍາຮັບເໝົາສຳຫຼວດວິໄຈດິນ ເພື່ອຮັບໃຊ້ໃຫ້ແກ່ການອອກແບບໂຄງການກໍ່ສ້າງອາຄານ, ຂົວ, ທາງ ລະຫວ່າງລັດກັບບຸກຄົນ, ນິຕິບຸກຄົນ ຫຼື ລະຫວ່າງບຸກຄົນ, ນິຕິບຸກຄົນ ເອກະຊົນດ້ວຍກັນ.

7. ສັນຍາຮັບເໝົາກໍ່ສ້າງ, ສ້ອມແປງອາຄານ, ຂົວ, ທາງ, ຊົນລະປະທານ, ເຂື່ອນໄຟຟ້າ ແລະ ອື່ນໆ, ສັນຍາສ້ອມແປງພາຫະນະ, ກົນຈັກ, ວັດຖຸອຸປະກອນ ແລະ ສັນຍາອອກແບບໂຄງການກໍ່ສ້າງຕ່າງໆ, ລະຫວ່າງລັດກັບບຸກຄົນ, ນິຕິບຸກຄົນ ຫຼື ລະຫວ່າງບຸກຄົນ, ນິຕິບຸກຄົນ ເອກະຊົນດ້ວຍກັນ;

- ສັນຍາຕິດຕາມໂຄງການກໍ່ສ້າງ ແລະ ບໍລິການຕ່າງໆ ລະຫວ່າງລັດ ກັບ ນິຕິບຸກຄົນ ຫຼື ລະຫວ່າງບຸກຄົນ, ນິຕິບຸກຄົນ ເອກະຊົນດ້ວຍກັນ.

## III. <u>ອັດຕາຄິດໄລ່ຄ່າທຳນຽມຈົດທະບຽນ.</u>

ອັດຕາຄິດໄລ່ຄ່າທຳນຽມຈົດທະບຽນເອກະສານແຕ່ລະປະເພດ ໃຫ້ປະຕິບັດຕາມອັດຕາທີ່ກຳນົດໄວ້ໃນ ມາດຕາ 6 ລັດຖະບັນຍັດ ຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ດັ່ງນີ້:

1. ສັນຍາໃຫ້ເຊົ່າ ແລະ ໃຫ້ຜູ້ອື່ນເຊົ່າຕໍ່ ກ່ຽວກັບສັງຫາລິມະຊັບ ແລະ ອະສັງຫາລິມະຊັບ.

| ມູນຄ່າສັນຍາ | ເຊົ່າ | ເຊົ່າຕໍ່ |
|---|---|---|
| ແຕ່ 200,000 ກີບ ຫາ 2,000,000 ກີບ | 40,000 ກີບ | 20,000 ກີບ |
| ຫລາຍກວ່າ 2,000,000 ກີບ ຫາ 10,000,000 ກີບ | 50,000 ກີບ | 40,000 ກີບ |
| ຫລາຍກວ່າ 10,000,000 ກີບ ຫາ 50,000,000 ກີບ | 100,000 ກີບ | 60,000 ກີບ |
| ຫລາຍກວ່າ 50,000,000 ກີບ ຫາ 100,000,000 ກີບ | 200,000 ກີບ | 80,000 ກີບ |
| ຫລາຍກວ່າ 100,000,000 ກີບ ຫາ 250,000,000 ກີບ | 300,000 ກີບ | 100,000 ກີບ |
| ຫລາຍກວ່າ 250,000,000 ກີບ ຫາ 500,000,000 ກີບ | 400,000 ກີບ | 120,000 ກີບ |
| ຫລາຍກວ່າ 500,000,000 ກີບ ຂຶ້ນໄປ | 500,000 ກີບ | 150,000 ກີບ |

2. ສັນຍາໃຫ້ສຳປະທານຊັບພະຍາກອນທຳມະຊາດຕ່າງໆ

| ມູນຄ່າສັນຍາ | ຊອກຄົ້ນ | ດຳເນີນກິດຈະການ |
|---|---|---|
| ແຕ່ 400,000,000 ກີບ ລົງມາ | 600,000 ກີບ | 1,000,000 ກີບ |
| ຫລາຍກວ່າ 400,000,000 ກີບ ຫາ 2,000,000,000 ກີບ | 3,000,000 ກີບ | 5,000,000 ກີບ |
| ຫລາຍກວ່າ 2,000,000,000 ກີບ ຫາ 10,000,000,000 ກີບ | 15,000,000 ກີບ | 25,000,000 ກີບ |
| ຫລາຍກວ່າ 10,000,000,000 ກີບ ຂຶ້ນໄປ | 30,000,000 ກີບ | 50,000,000 ກີບ |

3. ການໂອນກຳມະສິດ

| ລ/ດ | ເນື້ອໃນ | ອັດຕາ |
|---|---|---|
| 1 | ສັນຍາຊື້ - ຂາຍພາຫະນະຕໍ່ຄັນ, ອຸປະກອນເຄື່ອງໃຊ້ທຸກປະເພດ ແລະ ເຄື່ອງຈັກຕ່າງໆ ທີ່ຊື້ເຂົ້າມາໃໝ່ຊຶ່ງມີມູນຄ່າ | ກີບ |
| | ແຕ່ 5,000,000 ກີບ ລົງມາ | 25,000 |
| | ຫລາຍກວ່າ 5,000,000 ກີບ ຫາ 10,000,000 ກີບ | 50,000 |
| | ຫລາຍກວ່າ 10,000,000 ກີບ ຫາ 50,000,000 ກີບ | 250,000 |
| | ຫລາຍກວ່າ 50,000,000 ກີບ ຫາ 100,000,000 ກີບ | 500,000 |
| | ຫລາຍກວ່າ 100,000,000 ກີບ ຫາ 300,000,000 ກີບ | 1,000,000 |
| | ຫລາຍກວ່າ 300,000,000 ກີບ ຂຶ້ນໄປ | 2,000,000 |
| 2 | ສັນຍາຊື້ - ຂາຍ ພາຫະນະຕໍ່ຄັນ, ອຸປະກອນເຄື່ອງໃຊ້ທຸກປະເພດ ແລະ ເຄື່ອງຈັກປະເພດຕ່າງໆ ທີ່ນຳໃຊ້ໃນ ສປປ ລາວ ແລ້ວ, ການຊື້-ຂາຍໄມ້ແປຮູບ,ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບອອກຕ່າງປະເທດ, ການຊື້-ຂາຍໄມ້ທ່ອນໄມ້ກິ່ງຫງ່າ ແລະ ຕໍໄມ້ (ເຫງົ້າໄມ້) ອອກຕ່າງປະເທດ, ສັນຍາຊື້-ຂາຍ ເພື່ອແປຮູບຮັບໃຊ້ພາຍໃນປະເທດ ຊຶ່ງມີມູນຄ່າ | |
| | ແຕ່ 5,000,000 ກີບລົງມາ | 50,000 |
| | ຫລາຍກວ່າ 5,000,000 ກີບ ຫາ 10,000,000 ກີບ | 100,000 |
| | ຫລາຍກວ່າ 10,000,000 ກີບ ຫາ 50,000,000 ກີບ | 500,000 |
| | ຫລາຍກວ່າ 50,000,000 ກີບ ຫາ 100,000,000 ກີບ | 1,000,000 |
| | ຫລາຍກວ່າ 100,000,000 ກີບ ຫາ 300,000,000 ກີບ | 2,000,000 |
| | ຫລາຍກວ່າ 300,000,000 ກີບຂຶ້ນໄປ | 3,000,000 |

4. ສັນຍາໂອນຊັບເຂົ້າເປັນທຶນວິສາຫະກິດ

| ເປັນພາຫະນະ, ເຄື່ອງຈັກ, ເປັນເງິນ ຫລື ວັດຖຸ ແລະ ອຸປະກອນເຄື່ອງໃຊ້ ຊຶ່ງບໍ່ແມ່ນທີ່ດິນ | ອັດຕາ (ກີບ) |
|---|---|
| - ແຕ່ 10,000,000 ກີບ ລົງມາ | 20,000 |
| - ຫລາຍກວ່າ 10,000,000 ກີບ ຫາ 50,000,000 ກີບ | 40,000 |
| - ຫລາຍກວ່າ 50,000,000 ກີບ ຫາ 100,000,000 ກີບ | 80,000 |
| - ຫລາຍກວ່າ 100,000,000 ກີບ ຂຶ້ນໄປ | 120,000 |

5. ສັນຍາຮ່ວມປະກອບທຶນເພື່ອດຳເນີນທຸລະກິດປະເພດຕ່າງໆ.

- ມູນຄ່າ ແຕ່ 400,000,000 ກີບ ລົງມາ ຕ້ອງເສຍຄ່າທຳນຽມ 200,000 ກີບ
- ມູນຄ່າຫລາຍກວ່າ 400,000,000 ກີບ ຂຶ້ນໄປ ຕ້ອງເສຍຄ່າທຳນຽມ 500,000 ກີບ

6. ສັນຍາປະເພດຕ່າງໆ

| ລາຍການ | ແຕ່ 10 ລ້ານ ກີບລົງມາ | ຫລາຍກວ່າ 10 - 50 ລ້ານກີບ | ຫລາຍກວ່າ 50 - 100ລ້ານກີບ | ຫລາຍກວ່າ 100 ລ້ານກີບຂຶ້ນໄປ |
|---|---|---|---|---|
| ສັນຍາກູ້ຢືມເງິນ ຫລື ຊັບສິ່ງຂອງ | 10,000 ກີບ | 20,000 ກີບ | 50,000 ກີບ | 100,000 ກີບ |
| ຫນັງສືໂອນໜີ້ສິນ | 20,000 ກີບ | 50,000 ກີບ | 100,000 ກີບ | 200,000 ກີບ |
| ສັນຍາມອບໂອນຫລືໂອນກິດຈະການການຄ້າ, ການຜະລິດ, ການບໍລິການ ແລະ ການຂາຍຮຸ້ນ | 15,000 ກີບ | 25,000 ກີບ | 50,000 ກີບ | 100,000 ກີບ |
| ສັນຍາປະກັນໄພຕ່າງໆ | 10,000 ກີບ | 20,000 ກີບ | 25,000 ກີບ | 50,000 ກີບ |
| ສັນຍາຄ້ຳປະກັນ(ສັງຫາລິມະຊັບ) ຫລື ບຸກຄົນ | 5,000 ກີບ | 10,000 ກີບ | 15,000 ກີບ | 20,000 ກີບ |
| ສັນຍາການດຳເນີນການສຳຫລວດອອກແບບຕ່າງໆ. | 5,000 ກີບ | 10,000 ກີບ | 15,000 ກີບ | 20,000 ກີບ |

7. ສັນຍາຮັບເໝົາ, ສ້ອມແປງ, ອອກແບບ, ຕິດຕາມກວດກາກໍ່ສ້າງ, ສ້ອມແປງພາຫະນະ ແລະ ບໍລິການຕ່າງໆ

| ມູນຄ່າໂຄງການ | ກີບ/ຄັ້ງ |
|---|---|
| ແຕ່ 500,000 ກີບລົງມາ | 20,000 |
| ຫລາຍກວ່າ 500,000 ກີບ ຫາ 5,000,000 ກີບ | 25,000 |
| ຫລາຍກວ່າ 5,000,000 ກີບ ຫາ 25,000,000 ກີບ | 30,000 |
| ຫລາຍກວ່າ 25,000,000 ກີບ ຫາ 50,000,000 ກີບ | 50,000 |
| ຫລາຍກວ່າ 50,000,000 ກີບ ຫາ 100,000,000 ກີບ | 100,000 |
| ຫລາຍກວ່າ 100,000,000 ກີບ ຫາ 250,000,000 ກີບ | 250,000 |
| ຫລາຍກວ່າ 250,000,000 ກີບ ຫາ 500,000,000 ກີບ | 500,000 |
| ຫລາຍກວ່າ 500,000,000 ກີບ ຫາ 1,000,000,000 ກີບ | 1,000,000 |
| ຫລາຍກວ່າ 1,000,000,000 ກີບ ຫາ 3,000,000,000 ກີບ | 2,000,000 |
| ຫລາຍກວ່າ 3,000,000,000 ກີບ ຫາ 5,000,000,000 ກີບ | 4,000,000 |
| ຫລາຍກວ່າ 5,000,000,000 ກີບ ຫາ 10,000,000,000 ກີບ | 7,000,000 |
| ຫລາຍກວ່າ 10,000,000,000 ກີບ ຫາ 25,000,000,000 ກີບ | 17,000,000 |
| ຫລາຍກວ່າ 25,000,000,000 ກີບ ຫາ 50,000,000,000 ກີບ | 37,500,000 |
| ຫລາຍກວ່າ 50,000,000,000 ກີບ ຫາ 100,000,000,000 ກີບ | 75,000,000 |
| ຫລາຍກວ່າ 100,000,000,000 ກີບ ຫາ 150,000,000,000 ກີບ | 100,000,000 |
| ຫລາຍກວ່າ 150,000,000,000 ກີບຂຶ້ນໄປ | 125,000,000 |

## IV. ວິທີການຄິດໄລ່ຄ່າຈົດທະບຽນ.

ພື້ນຖານຄິດໄລ່ ຄ່າທຳນຽມຈົດທະບຽນແບບເດັດຖານຕາມມູນຄ່າຊັບ ໃຫ້ປະຕິບັດດັ່ງນີ້:

1. ພື້ນຖານຄິດໄລ່ ຄ່າທຳນຽມຈົດທະບຽນສັນຍາໃຫ້ເຊົ່າ ແລະ ໃຫ້ຜູ້ອື່ນເຊົ່າ ສັງຫາລິມະຊັບ ແລະ ອະສັງຫາລິມະຊັບແມ່ນໃຫ້ເອົາມູນຄ່າເຊົ່າຕະຫຼອດອາຍຸສັນຍາເຊົ່າ, ກໍລະນີສັນຍາໄດ້ກຳນົດກ່ຽວກັບການເພີ່ມຄ່າເຊົ່າໃນແຕ່ລະປີກໍ່ໃຫ້ບວກລວມທັງອັດຕາການເພີ່ມຄ່າເຊົ່າໃນແຕ່ລະປີເຂົ້າຕື່ມ ຈາກນັ້ນຈຶ່ງເລືອກອັດຕາຄ່າຈົດທະບຽນ ຕາມວົງເງິນຂອງມູນຄ່າເຊົ່າ ທີ່ໄດ້ກຳນົດຕະຫຼອດອາຍຸຂອງສັນຍາເຊົ່າໂດຍຂຶ້ນກັບເປົ້າໝາຍການເຊົ່າ ຫຼື ເຊົ່າຕໍ່;
2. ພື້ນຖານຄິດໄລ່ ອັດຕາຄ່າຈົດທະບຽນສັນຍາໃຫ້ສຳປະທານຊັບພະຍາກອນທຳມະຊາດ ແມ່ນໃຫ້ປະຕິບັດຕາມຫລັກການອັນດຽວກັບ ວິທີການຄິດໄລ່ອັດຕາຄ່າຈົດທະບຽນສັນຍາເຊົ່າທີ່ກຳນົດໄວ້ໃນຂໍ້1 ຂ້າງເທິງ ກ່ຽວກັບມູນຄ່າຂອງສັນຍາ ແມ່ນໃຫ້ຄິດໄລ່ຕາມອາຍຸສັນຍາສຳປະທານ, ແຕ່ຂຶ້ນກັບກິດຈະການສຳປະທານເພື່ອການຂຸດຄົ້ນ ຫຼື ດຳເນີນກິດຈະການ;
3. ພື້ນຖານວິທີຄິດໄລ່ ອັດຕາຄ່າທຳນຽມຈົດທະບຽນສັນຍາ ກ່ຽວກັບການໂອນກຳມະສິດເປັນຕົ້ນ: ພາຫະນະ, ກົນຈັກ, ວັດຖຸອຸປະກອນ ແມ່ນມີຄວາມແຕກຕ່າງກັນລະຫວ່າງພາຫະນະ, ກົນຈັກ: ນຳເຂົ້າມາໃໝ່ ຫຼື ນຳໃຊ້ຢູ່ ສປປ ລາວ ແລ້ວເປັນຕົ້ນ:
   - ກ). ການໂອນກຳມະສິດຊື້-ຂາຍ ພາຫະນະ, ກົນຈັກ, ວັດຖຸອຸປະກອນທີ່ຊື້ເຂົ້າມາໃໝ່ ແມ່ນການຊື້-ຂາຍ ລະຫວ່າງຫ້າງຮ້ານທີ່ນຳເຂົ້າພາຫະນະ, ກົນຈັກ ແລະ ວັດຖຸອຸປະກອນກັບບຸກຄົນ ຫຼື ນິຕິບຸກຄົນ (ບໍ່ທັນມີປ້າຍທະບຽນມາກ່ອນ) ໃຫ້ຄິດໄລ່ຄ່າຈົດທະບຽນເປັນປະເພດພາຫະນະ, ກົນຈັກ, ວັດຖຸອຸປະກອນທີ່ຊື້ເຂົ້າໃໝ່ ໂດຍໃຫ້ເອົາລາຄາຊື້-ຂາຍ ຕົວຈິງເປັນພື້ນຖານ;
   - ຂ). ການໂອນກຳມະສິດຊື້-ຂາຍພາຫະນະ, ກົນຈັກ, ວັດຖຸອຸປະກອນທີ່ນຳໃຊ້ຢູ່ ສປປ ລາວ ແລ້ວ ແມ່ນການຊື້-ຂາຍ ລະຫວ່າງອົງການຈັດຕັ້ງລັດກັບບຸກຄົນ ຫລື ລະຫວ່າງບຸກຄົນ, ນິຕິບຸກຄົນດ້ວຍກັນ (ພາຫະນະ, ກົນຈັກ, ວັດຖຸອຸປະກອນໄດ້ຂຶ້ນປ້າຍທະບຽນຢູ່ ສປປ ລາວ ແລ້ວ) ເພື່ອຮັບປະກັນບໍ່ໃຫ້ການແຈ້ງມູນຄ່າຊື້ - ຂາຍຕ່ຳກວ່າຄວາມເປັນຈິງ ໃຫ້ໃຊ້ວິທີປະເມີນຕາມຫຼັກການ ທີ່ກຳນົດໄວ້ຕາມມາດຕາ 17. ແລະ ມາດຕາ 18. ຂອງບົດແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນຂອງລັດ ຫຼື ປະເມີນຕາມລາຄາຊື້-ຂາຍ ຕົວຈິງໃນທ້ອງຕະຫຼາດໃນມື້ຈົດທະບຽນ;
4. ພື້ນຖານການຄິດໄລ່ອັດຕາຄ່າຈົດທະບຽນສັນຍາ ໂອນຊັບເຂົ້າເປັນທຶນຂອງວິສາຫະກິດ (ຊຶ່ງບໍ່ແມ່ນທີ່ດິນ) ແມ່ນໃຫ້ເອົາມູນຄ່າຊັບສິນທັງໝົດ ທີ່ປະກອບເຂົ້າເປັນທຶນວິສາຫະກິດ ເປັນພື້ນຖານຄິດໄລ່ອັດຕາຄ່າຈົດທະບຽນ;
5. ພື້ນຖານການຄິດໄລ່ອັດຕາຄ່າຈົດທະບຽນ ສັນຍາຮ່ວມປະກອບທຶນເພື່ອດຳເນີນທຸລະກິດປະເພດຕ່າງໆ ແມ່ນໃຫ້ເອົາມູນຄ່າທຶນທັງໝົດທີ່ຄູ່ຮ່ວມທຸລະກິດປະກອບເຂົ້າກັນ ເປັນພື້ນຖານຄິດໄລ່ຄ່າຈົດທະບຽນ;
6. ພື້ນຖານການຄິດໄລ່ອັດຕາຄ່າຈົດທະບຽນສັນຍາປະເພດຕ່າງໆ ເປັນຕົ້ນ ສັນຍາກູ້ຢືມເງິນ ຫຼື ຊັບສິ່ງຂອງ, ໜັງສືໂອນໜີ້ສິນ, ການມອບຫຼືໂອນກິດຈະການ, ການຄ້າ, ການຜະລິດ, ການບໍລິການ ແລະ ການຂາຍຮຸ້ນ, ສັນຍາປະກັນໄພ, ສັນຍາຄ້ຳປະກັນ (ສັງຫາລິມາຊັບ ຫຼື ບຸກຄົນ) ສັນຍາດຳເນີນການສຳຫລວດອອກແບບຕ່າງໆ ແມ່ນໃຫ້ເອົາມູນຄ່າທັງໝົດ ທີ່ກຳນົດໄວ້ໃນສັນຍາ ເປັນພື້ນຖານຄິດໄລ່ອັດຕາຄ່າຈົດທະບຽນ ຕາມແຕ່ລະຂັ້ນຂອງວົງເງິນ;
7. ພື້ນຖານການຄິດໄລ່ອັດຕາຄ່າຈົດທະບຽນສັນຍາຮັບເໝົາກໍ່ສ້າງ, ສ້ອມແປງ, ອອກແບບ, ຕິດຕາມກວດກາກໍ່ສ້າງ, ສ້ອມແປງພາຫະນະ ແລະ ບໍລິການຕ່າງໆ ແມ່ນໃຫ້ເອົາມູນຄ່າລວມທັງໝົດຂອງໂຄງການ ເຖິງວ່າການຊຳລະໂຄງການຈະແບ່ງອອກເປັນຫຼາຍປີກໍ່ຕາມ ການຈົດທະບຽນແມ່ນໃຫ້ຄິດໄລ່ເທື່ອດຽວ ຕາມມູນຄ່າທັງໝົດຂອງໂຄງການ.

## V. ສະຖານທີ່ຈົດທະບຽນເອກະສານ.

ສະຖານທີ່ ຈົດທະບຽນເອກະສານໄດ້ກຳນົດໄວ້ ດັ່ງນີ້:

1. ກະຊວງການເງິນ (ກົມຄຸ້ມຄອງຊັບສິນຂອງລັດ);
2. ຫ້ອງການຈົດທະບຽນຄ້ຳປະກັນດ້ວຍສັງຫາລິມະຊັບທາງເອເລັກໂຕຼນິກ ກົມຄຸ້ມຄອງຊັບສິນຂອງລັດ (ນຳໃຊ້ລະບົບຈົດທະບຽນການຄ້ຳປະກັນດ້ວຍສັງຫາລິມະຊັບທາງເອເລັກໂຕຼນິກ ສາມາດຈົດທະບຽນໄດ້ ຢູ່ສຳນັກງານຜູ້ໃຫ້ກູ້ຢືມ), ຢູ່ກົມຄຸ້ມຄອງຊັບສິນຂອງລັດ.
3. ພະແນກການເງິນແຂວງ, ນະຄອນຫຼວງ (ຫ້ອງການຄຸ້ມຄອງຊັບສິນຂອງລັດປະຈຳແຂວງ, ນະຄອນຫຼວງ);
4. ຈຸດບໍລິການຕ່າງໆ ທີ່ອົງການປົກຄອງແຂວງ, ນະຄອນຫລວງ ຕົກລົງໃຫ້ຫ້ອງການຄຸ້ມຄອງຊັບສິນຂອງລັດ ໄປຕັ້ງຈຸດບໍລິການ ຈົດທະບຽນເອກະສານເພີ່ມເຕີມ ນອກຈາກຫ້ອງການສະເພາະ;
5. ຫ້ອງການໆເງິນເມືອງ (ໜ່ວຍງານຄຸ້ມຄອງຊັບສິນຂອງລັດ);

## VI. ການແບ່ງຄວາມຮັບຜິດຊອບຈົດທະບຽນເອກະສານ.

1. <u>ກະຊວງການເງິນ ( ກົມຄຸ້ມຄອງຊັບສິນຂອງລັດ) ຮັບຜິດຊອບຈົດທະບຽນບັນດາເອກະສານຕ່າງໆ ດັ່ງນີ້:</u>
   - ປະເພດເອກະສານຈົດທະບຽນຕາມອັດຕາດຽວ 40,000 ກີບ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 6 ວັກທີ 1 ຂອງລັດຖະບັນຍັດ ເລກທີ 003/ປປທ, ເຊິ່ງສ້າງຂຶ້ນຢູ່ຂັ້ນສູນກາງ ຫຼື ອົງການຈັດຕັ້ງລັດຂັ້ນສູນກາງເຊັນຢັ້ງຢືນຮັບຮູ້ນຳ;
   - ສັນຍາໃຫ້ເຊົ່າ ແລະ ສັນຍາໃຫ້ຜູ້ອື່ນເຊົ່າສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ລະຫວ່າງລັດກັບບຸກຄົນ, ນິຕິບຸກຄົນ ທີ່ອົງການຈັດຕັ້ງຂັ້ນສູນກາງເຊັນສັນຍາ;
   - ສັນຍາໃຫ້ສຳປະທານ ຊັບພະຍາກອນທຳມະຊາດ ທີ່ອົງການຈັດຕັ້ງລັດຂັ້ນສູນກາງ ຕົກລົງເຊັນອະນຸຍາດລົງທຶນ ຫຼື ສັນຍາ;
   - ສັນຍາໂອນກຳມະສິດ: ສັນຍາຊື້-ຂາຍພາຫານະ, ວັດຖຸອຸປະກອນ ເຄື່ອງໃຊ້ທຸກປະເພດ ແລະ ເຄື່ອງຈັກຕ່າງໆທີ່ຊື້ເຂົ້າໃໝ່ ຫຼື ນຳໃຊ້ຢູ່ ສປປ ລາວ ຜ່ານມາແລ້ວ ທີ່ນຳໃຊ້ງົບປະມານຂອງສູນກາງ;
   - ສັນຍາຊື້-ຂາຍ ໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ ອອກຕ່າງປະເທດ, ການຊື້-ຂາຍໄມ້ທ່ອນ, ໄມ້ກິ່ງຫງ່າ ແລະ ຕໍໄມ້ (ເຫງົ້າໄມ້) ອອກຕ່າງປະເທດ, ສັນຍາຊື້-ຂາຍໄມ້ ເພື່ອແປຮູບຮັບໃຊ້ພາຍໃນປະເທດ ຊຶ່ງອົງການຈັດຕັ້ງລັດຂັ້ນສູນກາງ ເຊັນສັນຍາຊື້-ຂາຍ;
   - ສັນຍາໂອນຊັບເຂົ້າເປັນທຶນວິສາຫະກິດ ສຳລັບຫົວໜ່ວຍວິສາຫະກິດ ທີ່ໄດ້ຮັບອະນຸຍາດລົງທຶນ ຫຼື ຂຶ້ນທະບຽນຢູ່ສູນກາງ;
   - ສັນຍາຮ່ວມປະກອບທຶນ ເພື່ອດຳເນີນທຸລະກິດປະເພດຕ່າງໆ ສຳລັບຫົວໜ່ວຍວິສາຫະກິດ ທີ່ໄດ້ຮັບອະນຸຍາດລົງທຶນ ຫຼື ຂຶ້ນທະບຽນຢູ່ສູນກາງ;
   - ສັນຍາປະເພດຕ່າງໆ ທີ່ອົງການຈັດຕັ້ງລັດຂັ້ນສູນກາງ ເຊັນຢັ້ງຢືນຮັບຮູ້;
   - ສັນຍາຮັບເໝົາກໍ່ສ້າງ, ສັນຍາອອກແບບ, ຕິດຕາມກວດກາການກໍ່ສ້າງ, ສ້ອມແປງພາຫານະ ແລະ ບໍລິການຕ່າງໆ ທີ່ນຳໃຊ້ງົບປະມານຂອງສູນກາງ.
2. <u>ພະແນກການເງິນແຂວງ, ນະຄອນຫຼວງ (ຫ້ອງການຄຸ້ມຄອງຊັບສິນຂອງລັດປະຈຳແຂວງ, ນະຄອນຫຼວງ) ຮັບຜິດຊອບຈົດທະບຽນບັນດາເອກະສານຕ່າງໆ ດັ່ງນີ້:</u>
   - ປະເພດເອກະສານຈົດທະບຽນຕາມອັດຕາດຽວ 40,000 ກີບ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 6 ວັກທີ 1 ຂອງລັດຖະບັນຍັດເລກທີ 003/ປປທ, ເຊິ່ງສ້າງຂຶ້ນຢູ່ຂັ້ນແຂວງ, ນະຄອນຫຼວງ ຫຼື ອົງການຈັດຕັ້ງລັດຂັ້ນແຂວງ, ນະຄອນຫລວງ ເຊັນຢັ້ງຢືນຮັບຮູ້ນຳ;

- ສັນຍາໃຫ້ເຊົ່າ ແລະ ສັນຍາໃຫ້ຜູ້ອື່ນເຊົ່າ ສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ລະຫວ່າງລັດກັບບຸກຄົນ, ນິຕິບຸກຄົນ ທີ່ອົງການຈັດຕັ້ງລັດ ຂັ້ນແຂວງ, ນະຄອນຫຼວງເຊັນສັນຍາ ແລະ ສັນຍາລະຫວ່າງບຸກຄົນນິຕິບຸກຄົນ, ເອກະຊົນທີ່ສ້າງຂຶ້ນຢູ່ແຂວງ, ນະຄອນຫລວງ ຫຼື ອົງການຈັດຕັ້ງລັດຂັ້ນແຂວງ, ນະຄອນຫຼວງເຊັນຢັ້ງຢືນຮັບຮູ້ນໍາ;
- ສັນຍາໃຫ້ສໍາປະທານຊັບພະຍາກອນທໍາມະຊາດທີ່ອົງການປົກຄອງແຂວງ, ນະຄອນຫຼວງ ຕົກລົງ ແລະ ເຊັນສັນຍາ;
- ສັນຍາໂອນກໍາມະສິດ ສັນຍາຊື້-ຂາຍພາຫະນະ, ວັດຖຸອຸປະກອນ ເຄື່ອງໃຊ້ທຸກປະເພດ ແລະ ເຄື່ອງຈັກຕ່າງໆ ທີ່ຊື້ເຂົ້າໃໝ່ ຫຼື ນໍາໃຊ້ຢູ່ ສປປ ລາວ ຜ່ານມາແລ້ວ ທີ່ນໍາໃຊ້ງົບປະມານຂອງແຂວງ, ນະຄອນຫຼວງ, ສັນຍາຊື້-ຂາຍພາຫະນະ, ວັດຖຸອຸປະກອນ, ເຄື່ອງຈັກ ແລະ ເຄື່ອງໃຊ້ທຸກປະເພດ ລະຫວ່າງບຸກຄົນ ເອກະຊົນທີ່ອົງການຈັດຕັ້ງລັດຂັ້ນແຂວງ, ນະຄອນຫຼວງ ຮັບຮູ້;
- ສັນຍາຊື້-ຂາຍ ໄມ້ແປຮູບ, ໄມ້ເຄິ່ງສໍາເລັດຮູບ ແລະ ໄມ້ສໍາເລັດຮູບ ອອກຕ່າງປະເທດ, ການຊື້-ຂາຍໄມ້ທ່ອນ, ໄມ້ກິ່ງຫງ່າ ແລະ ຕໍໄມ້ (ເຫງົ້າໄມ້) ອອກຕ່າງປະເທດ, ສັນຍາຊື້-ຂາຍໄມ້ ເພື່ອແປຮູບຮັບໃຊ້ພາຍໃນປະເທດ ຊຶ່ງອົງການຈັດຕັ້ງລັດຂັ້ນແຂວງ, ນະຄອນຫຼວງ ເຊັນສັນຍາຊື້-ຂາຍ;
- ສັນຍາໂອນຊັບເຂົ້າເປັນທຶນວິສະຫະກິດ ສໍາລັບຫົວໜ່ວຍວິສະຫະກິດ ທີ່ໄດ້ຮັບອະນຸຍາດລົງທຶນ ຫຼື ຂຶ້ນທະບຽນຢູ່ແຂວງ ແລະ ນະຄອນຫຼວງ;
- ສັນຍາຮ່ວມປະກອບທຶນ ເພື່ອດໍາເນີນທຸລະກິດປະເພດຕ່າງໆ ສໍາລັບຫົວໜ່ວຍວິສະຫະກິດ ທີ່ໄດ້ຮັບອະນຸຍາດລົງທຶນ ຫຼື ຂຶ້ນທະບຽນຢູ່ແຂວງ, ນະຄອນຫຼວງ;
- ສັນຍາປະເພດຕ່າງໆ ທີ່ອົງການຈັດຕັ້ງລັດຂັ້ນແຂວງ, ນະຄອນຫຼວງເຊັນຢັ້ງຢືນຮັບຮູ້;
- ສັນຍາຮັບເໝົາກໍ່ສ້າງ, ສັນຍາອອກແບບ, ຕິດຕາມກວດກາການກໍ່ສ້າງ, ສ້ອມແປງພາຫານະ ແລະ ບໍລິການຕ່າງໆ ທີ່ນໍາໃຊ້ງົບປະມານຂອງແຂວງ, ນະຄອນຫຼວງ ຫຼື ສັນຍາລະຫວ່າງບຸກຄົນ, ນິຕິບຸກຄົນ, ເອກະຊົນ ຊຶ່ງໄດ້ຮັບອະນຸຍາດຂຶ້ນທະບຽນເຄື່ອນໄຫວໃນຂອບເຂດພາຍໃນແຂວງ ແລະ ນະຄອນຫຼວງ.

3. <u>ຫ້ອງການການເງິນເມືອງ (ໜ່ວຍງານຄຸ້ມຄອງຊັບສິນຂອງລັດປະຈໍາເມືອງ) ຮັບຜິດຊອບຈົດທະບຽນ ບັນດາເອກະສານຕ່າງໆ ດັ່ງນີ້:</u>

- ປະເພດເອກະສານຈົດທະບຽນຕາມອັດຕາດຽວ 40,000 ກີບ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 6. ວັກທີ 1 ຂອງລັດຖະບັນຍັດ ສະບັບເລກທີ 003/ປປທ, ເຊິ່ງສ້າງຂຶ້ນຢູ່ຂັ້ນເມືອງ ຫຼື ອົງການຈັດຕັ້ງລັດຂັ້ນເມືອງ ເຊັນຢັ້ງຢືນຮັບຮູ້ນໍາ;
- ສັນຍາເຊົ່າ ແລະ ສັນຍາໃຫ້ຜູ້ອື່ນເຊົ່າສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ລະຫວ່າງລັດກັບບຸກຄົນ, ນິຕິບຸກຄົນ ທີ່ອົງການຈັດຕັ້ງລັດ ຂັ້ນເມືອງເຊັນສັນຍາ ແລະ ສັນຍາລະຫວ່າງບຸກຄົນ ນິຕິບຸກຄົນ, ເອກະຊົນທີ່ສ້າງຂຶ້ນຢູ່ເມືອງ ຫຼື ອົງການຈັດຕັ້ງລັດຂັ້ນເມືອງເຊັນຢັ້ງຢືນຮັບຮູ້ນໍາ;
- ສັນຍາສໍາປະທານ ຊັບພະຍາກອນທໍາມະຊາດ ທີ່ອົງການປົກຄອງເມືອງອະນຸຍາດ ຫຼື ຕົກລົງເຊັນສັນຍາ;
- ສັນຍາໂອນກໍາມະສິດ, ສັນຍາຊື້ - ຂາຍ ວັດຖຸອຸປະກອນ ເຄື່ອງໃຊ້ທຸກປະເພດ ແລະ ເຄື່ອງຈັກປະເພດຕ່າງໆ ທີ່ຊື້ໃໝ່ນໍາໃຊ້ງົບປະມານຂອງເມືອງ, ສັນຍາຊື້-ຂາຍວັດຖຸອຸປະກອນເຄື່ອງໃຊ້ທຸກປະເພດ ແລະ ເຄື່ອງຈັກປະເພດຕ່າງໆ ລະຫວ່າງບຸກຄົນ, ນິຕິບຸກຄົນເອກະຊົນເຊິ່ງສ້າງຂຶ້ນຢູ່ພາຍໃນເມືອງ ຫຼື ອົງການຈັດຕັ້ງລັດຂັ້ນເມືອງເຊັ່ນຢັ້ງຢືນຮັບຮູ້ນໍາ;
- ສັນຍາຊື້-ຂາຍໄມ້ແປຮູບ, ໄມ້ເຄິ່ງສໍາເລັດຮູບ ຫຼືໄມ້ສໍາເລັດຮູບລະຫວ່າງໂຮງງານເຟີນີເຈີ ກັບບຸກຄົນ, ນິຕິບຸກຄົນພາຍໃນປະເທດ ທີ່ສ້າງຂຶ້ນພາຍໃນເມືອງ ຫລື ອົງການຈັດຕັ້ງລັດຂັ້ນເມືອງເຊັນຢັ້ງຢືນຮັບຮູ້ນໍາ;
- ສັນຍາໂອນຊັບເຂົ້າເປັນທຶນຂອງລັດວິສາຫະກິດ ສໍາລັບຫົວໜ່ວຍວິສາຫະກິດ ທີ່ໄດ້ຮັບອະນຸຍາດລົງທຶນ ຫຼື ຂຶ້ນທະບຽນວິສາຫະກິດພາຍໃນເມືອງ;

- ສັນຍາຮ່ວມປະກອບທຶນ ເພື່ອດຳເນີນທຸລະກິດຕ່າງໆ ສຳລັບຫົວໜ່ວຍວິສະຫະກິດ ທີ່ເມືອງອອກໃບອະນຸຍາດລົງທຶນ ຫຼື ຂຶ້ນທະບຽນວິສະຫະກິດ;
- ສັນຍາປະເພດຕ່າງໆ ທີ່ອົງການຈັດຕັ້ງລັດຂັ້ນເມືອງອອກອະນຸຍາດ ຫຼື ຂຶ້ນທະບຽນວິສະຫະກິດ ຫຼື ເຊັນຢັ້ງຢືນຮັບຮູ້;
- ສັນຍາຮັບເໝົາກໍ່ສ້າງ, ສັນຍາອອກແບບ, ຕິດຕາມກວດກາການກໍ່ສ້າງ, ສ້ອມແປງພາຫະນະ ແລະ ບໍລິການຕ່າງໆ ທີ່ນຳໃຊ້ງົບປະມານຂອງເມືອງ ຫຼື ສັນຍາລະຫວ່າງບຸກຄົນ, ນິຕິບຸກຄົນເອກະຊົນ ຊຶ່ງໄດ້ຮັບອະນຸຍາດຂຶ້ນທະບຽນເຄື່ອນໄຫວໃນຂອບເຂດພາຍໃນເມືອງ ຫຼື ອົງການຈັດຕັ້ງລັດຂັ້ນເມືອງເຊັນຢັ້ງຢືນຮັບຮູ້.

## VII. <u>ຂໍ້ຫ້າມ.</u>

1. ເອກະສານນຳເຂົ້າ-ສົ່ງອອກ ສິນຄ້າຢູ່ດ່ານ ທີ່ຂຶ້ນກັບແຂວງໃດໃຫ້ນຳເອົາເອກະສານໄປຈົດທະບຽນຢູ່ຫ້ອງການຄຸ້ມຄອງຊັບສິນຂອງລັດປະຈຳແຂວງ ຫຼື ນະຄອນຫຼວງບ່ອນດ່ານຕັ້ງຢູ່ ບໍ່ອະນຸຍາດໃຫ້ນຳເອົາເອກະສານທີ່ນຳເຂົ້າ ຫຼື ສ້າງຂຶ້ນຢູ່ ແຂວງໜຶ່ງໄປຈົດທະບຽນ ຢູ່ແຂວງ ຫຼື ເມືອງ ອື່ນ;
2. ເອກະສານສັນຍາຊື້-ຂາຍ, ສັນຍາຮັບເໝົາກໍ່ສ້າງ ແລະ ບໍລິການຕ່າງໆ, ສັນຍາເຊົ່າ, ສຳປະທານ, ສັນຍາມອບໂອນຕ່າງໆ ທີ່ສ້າງຂຶ້ນ ຫຼື ດຳເນີນກິດຈະການຢູ່ແຂວງໃດ ໃຫ້ນຳໄປຈົດທະບຽນຢູ່ແຂວງ ຫຼື ນະຄອນຫຼວງ ບ່ອນເຊັນຢັ້ງຢືນເອກະສານດັ່ງກ່າວ ຫ້າມບໍ່ໃຫ້ນຳເອກະສານ ທີ່ສ້າງຂຶ້ນຢູ່ແຂວງໜຶ່ງໄປຈົດທະບຽນ ຢູ່ແຂວງ ຫຼື ເມືອງ ອື່ນ;
3. ບໍ່ອະນຸຍາດໃຫ້ຫ້ອງຄຸ້ມຄອງຊັບສິນຂອງລັດ ປະຈຳແຂວງ ແລະ ເມືອງ ຈົດທະບຽນສັນຍາຊື້ - ຂາຍພາຫະນະ, ວັດຖຸອຸປະກອນເຄື່ອງໃຊ້ທຸກປະເພດ ແລະ ເຄື່ອງຈັກປະເພດຕ່າງໆ ທີ່ຂຶ້ນບັນຊີ ແລະ ນຳໃຊ້ງົບປະມານຢູ່ສູນກາງມາຈົດທະບຽນຢູ່ແຂວງ ແລະ ເມືອງຕົນ;
4. ບໍ່ອະນຸຍາດໃຫ້ຫ້ອງຄຸ້ມຄອງຊັບສິນຂອງລັດ ປະຈຳແຂວງຈົດທະບຽນສັນຍາຊື້ - ຂາຍພາຫະນະ, ວັດຖຸອຸປະກອນເຄື່ອງໃຊ້ທຸກປະເພດ ແລະ ເຄື່ອງຈັກປະເພດຕ່າງໆ ທີ່ຂຶ້ນບັນຊີນຳໃຊ້ຢູ່ແຂວງອື່ນ ມາຈົດທະບຽນຢູ່ແຂວງຕົນ;
5. ບໍ່ອະນຸຍາດໃຫ້ໜ່ວຍງານຄຸ້ມຄອງຊັບສິນຂອງລັດ ປະຈຳເມືອງຈົດທະບຽນສັນຍາຊື້-ຂາຍ ພາຫະນະທຸກປະເພດໃຫ້ນຳມາຈົດທະບຽນລວມສູນຢູ່ຫ້ອງການຄຸ້ມຄອງຊັບສິນຂອງລັດປະຈຳແຂວງ, ນະຄອນຫຼວງ ຫຼື ຈຸດບໍລິການສະເພາະທີ່ອົງການປົກຄອງແຂວງ, ນະຄອນຫຼວງ ຕົກລົງ;
6. ເອກະສານ ຂໍ້ຜູກພັນສັນຍາ ຫຼື ໜັງສືຢັ້ງຢືນຕ່າງໆ ທີ່ເຮັດຂຶ້ນຢູ່ເມືອງໃດ ໃຫ້ນຳໄປຈົດທະບຽນ ຢູ່ນຳໜ່ວຍງານຄຸ້ມຄອງຊັບສິນຂອງລັດປະຈຳເມືອງນັ້ນ, ບໍ່ອະນຸຍາດໃຫ້ນຳເອົາເອກະສານ ທີ່ສ້າງຂຶ້ນຢູ່ເມືອງໜຶ່ງໄປຈົດທະບຽນຢູ່ເມືອງອື່ນ;
7. ບໍ່ອະນຸຍາດໃຫ້ໃຊ້ອັດຕາຈົດທະບຽນພາຫານະທີ່ໃຊ້ແລ້ວ ມາຈົດທະບຽນພາຫະນະທີ່ຊື້ໃໝ່ ຫຼື ນຳໃຊ້ພື້ນຖານຄິດໄລ່ອັດຕາຄ່າຈົດທະບຽນ ທີ່ປະເມີນຕໍ່າກວ່າຄວາມເປັນຈິງ;

## VIII. <u>ມາດຕະການປັບໃໝຕໍ່ຜູ້ລະເມີດ.</u>

1. ການປັບໃໝຕໍ່ຜູ້ຄຸ້ມຄອງເກັບຄ່າທຳນຽມຈົດທະບຽນ ຂະແໜງການຂອງລັດ ແຕ່ລະຂັ້ນທີ່ມີໜ້າທີ່ເກັບຄ່າທຳນຽມ ແລະ ຄ່າບໍລິການຈາກບຸກຄົນນິຕິບຸກຄົນ, ແລະ ອົງການຈັດຕັ້ງ ທີ່ລະເມີດການເກັບ, ການແຈ້ງ, ການມອບ ແລະ ການລາຍງານ ຈະຖືກປະຕິບັດມາດຕະການ ຕາມແຕ່ກໍລະນີດັ່ງລຸ່ມນີ້:

   ຄັ້ງທີ 1: ຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກການກະທຳຜິດໄວ້;

   ຄັ້ງທີ 2: ຖືກປັບໃໝ 5% ຂອງຈຳນວນເງິນຄ່າທຳນຽມ ແລະ ຄ່າບໍລິການທີ່ຄ້າງມອບໃນແຕ່ລະເດືອນ.

- ກໍລະນີ: ບໍ່ຈົດກ່າຍ ຫລື ສະຫລຸບບັນຊີບໍ່ຖືກຕອ້ງ, ມອບບໍ່ຄົບຖ້ວນ, ເກັບເງິນບໍ່ຖືກຕ້ອງຕາມອັດຕາທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດສະບັບນີ້, ບໍ່ອອກໃບຮັບເງິນ ຫລື ອອກ ແຕ່ບໍ່ຖືກຕ້ອງຕາມແບບພິມທີ່ກະຊວງການເງິນກຳນົດໄວ້ ແລະ ອື່ນໆ ຈະຖືກມາດຕະການດັ່ງນີ້:

- ເງິນຄ່າທຳນຽມ ແລະ ຄ່າບໍລິການເສຍຫາຍ ແຕ່ 5,000,000 ກີບ ລົງມາ ຈະຖືກກ່າວເຕືອນ, ຂຽນໃບສຳຫຼວດ ແລ້ວໃຫ້ຊຳລະເງິນທີ່ເສຍຫາຍຄືນໃຫ້ຄົບຖ້ວນ, ກໍລະນີບຸກຄົນກະທຳຜິດໃຫ້ຍົກຍ້າຍໄປຮັບຜິດຊອບວຽກອື່ນທີ່ບໍ່ຕິດພັນ;
- ເງິນຄ່າທຳນຽມ ແລະ ຄ່າບໍລິການວິຊາການເສຍຫາຍ ແຕ່ 5,000,001 ກີບ ຂຶ້ນເມືອ ໃຫ້ຂຽນບົດສຳຫລວດ, ຊຳລະເງິນທີ່ເສຍຫາຍຄືນໃຫ້ຄົບຖ້ວນ ພ້ອມທັງປະຕິບັດວິໃນຕາມຂັ້ນຕອນ ຂອງລະບຽບກົດໝາຍ.

2. ການປັບໃໝຕໍ່ຜູ້ລະເມີດບໍ່ເສຍຄ່າທຳນຽມຈົດທະບຽນ ຫຼື ແຈ້ງຕ່ຳກວ່າຄວາມເປັນຈິງ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ທີ່ມີໜ້າທີ່ເສຍຄ່າທຳນຽມ ແລະ ຄ່າບໍລິການຫາກບໍ່ເສຍຄ່າທຳນຽມ, ຄ່າບໍລິການ ຫລື ແຈ້ງເອກະສານຢັ້ງຢືນ ພ້ອມຂໍ້ມູນພື້ນຖານການຄິດໄລ່ບໍ່ຖືກຕ້ອງຕາມທີ່ຂະແໜງຄຸ້ມຄອງຊັບສິນຂອງລັດວາງອອກຈະຖືກປະຕິບັດມາດຕະການ ດັ່ງລຸ່ມນີ້:
   - ຄັ້ງທີ 1: ໃຫ້ກ່າວເຕືອນ, ແນະນຳສຶກສາອົບຮົມ, ເສຍຄືນໃຫ້ຄົບຖ້ວນ;
   - ຄັ້ງທີ 2: ໃຫ້ເສຍຄືນໃຫ້ຄົບຖ້ວນ ແລະ ປັບໃໝ 20% ຂອງມູນຄ່າທີ່ໃຫ້ເສຍຄືນ;
   - ຄັ້ງທີ 3: ໃຫ້ເສຍຄືນໃຫ້ຄົບຖ້ວນ ແລະ ປັບໃໝ 50% ຂອງມູນຄ່າທີ່ໃຫ້ເສຍຄືນ;
   - ຄັ້ງທີ 4: ດຳເນີນຄະດີ ຕາມຂັ້ນຕອນຂະບວນການຍຸຕິທຳ.
3. ທຸກໆການປັບໃໝ ຕ້ອງປະຕິບັດຕາມບົດບັນທຶກຢັ້ງຢືນໂດຍ ກຳນົດແບ່ງລາຍການປັບໃໝ ໃນແຕ່ລະກໍລະນີທີ່ກ່າວໄວ້ໃນໂລແມັງ VIII ຂ້າງເທິງ ແລະ ຕ້ອງນຳໃຊ້ໃບເກັບເງິນຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ.
   - ການປັບໃໝທີ່ສາມາດນຳໃຊ້ເປັນຄ່າບຳເນັດໄດ້ ແມ່ນປະຕິບັດຕາມລະບຽບສະເພາະຂອງກະຊວງການເງິນ ກັບການໃຫ້ບຳເນັດຕໍ່ຜູ້ມີຜົນງານ.

## IX. ການຈັດຕັ້ງປະຕິບັດ.

1. ກົມຄຸ້ມຄອງຊັບສິນຂອງລັດ, ພະແນກການເງິນແຂວງ, ຂະແໜງການຄຸ້ມຄອງຊັບສິນຂອງລັດປະຈຳແຂວງ, ນະຄອນຫຼວງ, ຫ້ອງການການເງິນເມືອງ, ໜ່ວຍງານຄຸ້ມຄອງຊັບສິນຂອງລັດ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.
2. ທຸກໆ ຂະແໜງການທີ່ກ່ຽວຂ້ອງຂອງລັດ ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ມີໜ້າທີ່ຊຸກຍູ້ບຸກຄົນ, ນິຕິບຸກຄົນ ແລະ ຜູ້ປະກອບການຕ່າງໆ ນຳເອົາເອກະສານໄປຈົດທະບຽນໃຫ້ຖືກຕ້ອງ ສອດຄ່ອງຕາມລະບຽບກົດໝາຍ;

## X. ຜົນສັກສິດ

ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການກະຊວງການເງິນ.**

ດຣ ລຽນ ທິແກ້ວ